

ເກືອແຫ່ງແຜ່ນດິນໂລກ



ການມີເຮົາຢູ່ນ່ຳເຮັດໃຫ້ທຸກຢ່າງແຕກຕ່າງ ອອກໄປ
ໂດຍ: ອາຈານ ເດເຣັກ ປີ້ຣນຊ

“ ທ່ານທັ້ງຫຼາຍເປັນເກືອແຫ່ງໂລກ..” (ມັດທາຍ5:13 ພຄສ2015) ໃນຄຳກ່າວນີ້ ພຣະເຍຊູ ບໍ່ໄດ້ກ່າວຄັ້ງຕຣັດກັບເຫຼົ່າສາວົກຂອງພຣະອົງເທົ່ານັ້ນ ແຕ່ກ່າວຄັ້ງຕຣັດກັບເຮົາທຸກຄົນ ທີ່ຍອມຮັບໃນຣິດອຳນາດແຫ່ງຄຳສອນຂອງພຣະອົງດ້ວຍ, ພຣະເຍຊູຊົງປຽບທຽບບົດບາດ ແລະໜ້າທີ່ຂອງເຮົາບົນໂລກນີ້ເໝືອນກັບເກືອ ແລະຄວາມຫມາຍຂອງພຣະອົງຊັດເຈນຂຶ້ນ ເມື່ອເຮົາພິຈາລະນາເຖິງການໃຊ້ເກືອສອງຢ່າງທີ່ລ້ຳເຄີຍກ່ຽວຂ້ອງກັບອາຫານຄື: ເກືອເຮັດໃຫ້ມີຣິດຊາດ ແລະເກືອປ້ອງກັນການເນົ່າເສຍ.

ເກືອເຮັດໃຫ້ມີຣິດຊາດ

ໃນຖານະຄຣິສຕຽນ ໜ້າທີ່ຂອງເຮົາໃນຖານະເກືອຄື: ການປຸງແຕ່ງໂລກນີ້ໃຫ້ມີຣິດຊາດ, ພຣະເຈົ້າຊົງພ້ອມໃຫ້ພຣະໄທໃນຣິດຊາດນີ້, ອາຫານທີ່ບໍ່ຫນ້າແຊບຈະການເປັນອາຫານທີ່ແຊບ ແລະຍອມຮັບໄດ້ເມື່ອປຸງຣິດດ້ວຍເກືອ ໂຢບຕັ້ງຄຳຖາມເຊິ່ງວາທະສົນວ່າ:

> “ຜູ້ໃດກິນຂອງຈືດຈາງໄດ້ ໂດຍບໍ່ໃສ່ເກືອແດ່?” (ໂຢບ 6:6 ພຄສ2015)

ການມີເກືອເປັນສິ່ງທີ່ສ້າງຄວາມແຕກຕ່າງ ເຮັດໃຫ້ເຮົາສາມາດເພີດເພີນກັບອາຫານ ທີ່ເຮົາບໍ່ຢາກກິນເລີຍຖ້າບໍ່ມີເກືອ.

ການມີເຮົາຢູ່ດ້ວຍເຮັດໃຫ້ໂລກເປັນທີ່ຍອມຮັບຂອງພຣະເຈົ້າ ແລະ ນ່ຳໂລກມາຢູ່ພາຍໃຕ້ ພຣະເມດຕາຂອງພຣະອົງ ເນື່ອງຈາກເຮົາຢູ່ທີ່ນີ້ພຣະເຈົ້າຈຶ່ງຍັງຊົງກະທ່ຳຕໍ່ໂລກນີ້ດ້ວຍພຣະຄຸນ ແລະພຣະເມຕາຕໍ່ໄປ ແທນທີ່ຈະໃຊ້ພຣະພິໂຣດ ແລະການພິພາກສາ ການມີເຮົາຢູ່ດ້ວຍ ຈຶ່ງສ້າງຄວາມແຕກຕ່າງ.

ຫຼັກການນີ້ ປາກົດຊັດເຈນໃນເລື່ອງລາວການອະຖິຖານ ວິ່ງວອນຂອງອັບຣາຮາມ ເພື່ອເມືອງໂຊໂດມ ດັ່ງທີ່ບັນທຶກໄວ້ໃນປະຖົມມະການ 18:16–33 ອົງພຣະຜູ້ເປັນເຈົ້າ ຕຣັດວ່າກັບອັບຣາຮາມວ່າ ພຣະອົງຈະສະເດັດໄປເມືອງໂຊໂດມ ເພື່ອເບິ່ງວ່າຄວາມຊົ່ວຮ້າຍ ຂອງເມືອງນັ້ນໄດ້ມາເຖິງຈຸດທີ່ບໍ່ອາດຍັບຍັ້ງການພິພາກສາໄດ້ອີກຕໍ່ໄປຫຼືບໍ່, ຈາກນັ້ນ ອັບຣາຮາມກໍ່ດີນໄປກັບພຣະຜູ້ເປັນເຈົ້າຕາມທາງຂອງພຣະອົງ ແລະໄດ້ທູນ ຕໍ່ພຣະອົງດ້ວຍຫຍ ແລະຜິນເພື່ອໄນ້ມນ້ອມພຣະອົງກ່ຽວກັບສະຖານະການທີ່ເກີດຂຶ້ນ.

ຫຼັກການແຫ່ງການພິພາກສາ

ອັບຣາຮາມ ໄດ້ເລີ່ມຕົ້ນດ້ວຍການວາງຫຼັກການເຊິ່ງເປັນພື້ນຖານສຳລັບສິ່ງທີ່ຈະຕາມມາ ກ່າວຄື: ບໍ່ແມ່ນນ້ຳພຣະໄທຂອງພຣະເຈົ້າທີ່ຈະໃຫ້ການພິພາກສາ ເຊິ່ງສົມຄວນຕົກແກ່ຄົນຊົ່ວ ມາຕົກຢູ່ກັບຄວາມຊອບທຳດ້ວຍ ອັບຣາຮາມໄດ້ທູນຖາມພຣະເຈົ້າວ່າ: "ພຣະອົງຈະທຳລາຍ ຄົນຊອບທຳກັບຄົນອະທຳໄປພ້ອມກັນຫຼືບໍ່ ?" (ຂໍ້ 23 ພຄສ2015) "ແນ່ນອນທີ່ສຸດ ພຣະອົງຈະບໍ່ຂ້າຄົນຊອບທຳພ້ອມກັບຄົນອະທຳ ເປັນໄປບໍ່ໄດ້

ລິຂະສິດ © 2009 ພັນທະກິດ ເດເຣັກ ປີ້ຣນຊ

ພຣະອົງຈະບໍ່ເຮັດເຊັ່ນນັ້ນ, ຖ້າພຣະອົງເຮັດຄົນຊອບທຳ ກໍ່ຈະຖືກລົງໂທດ
ເຊັ່ນດຽວກັບຄົນອະທຳແປັນໄປບໍ່ໄດ້ ຜູ້ພິພາກ
ສາທົ່ວໂລກຕ້ອງເຮັດທຸດສິ່ງຢ່າງຍຸດຕິທຳ."(ຂ້ 25 ພຄສ2015)

ອົງພຣະຜູ້ເປັນເຈົ້າຊົງເຮັດໃຫ້ເຫັນຊັດເຈນໃນບົດສົນທະນາທີ່ຕາມມາວ່າພຣະອົງຊົ
ງຍອມຮັບຫຼັກການທີ່ ອັບຣາຮາມໄດ້ກ່າວວ່າ
ນີ້ເປັນສິ່ງສຳຄັນຫຼາຍທີ່ຜູ້ເຊື່ອທຸກຄົນຕ້ອງເຂົ້າໃຈເລື່ອງນີ້!
ຫາກເຮົາໄດ້ຮັບຄວາມຊອບທຳໂດຍຄວາມເຊື່ອໃນພຣະຄຣິດ ແລະ
ດຳເນີນຊີວິດທີ່ສຳແດງ ຄວາມເຊື່ອຢ່າງແທ້ຈິງແລ້ວ
ກໍ່ບໍ່ແມ່ນນ້ຳພຣະໄທຂອງພຣະເຈົ້າເລີຍທີ່ເຮົາຈະຕ້ອງໄດ້ຮັບການ
ພິພາກສາທີ່ພຣະອົງຊົງນຳມາສູ່ຄວາມຊົ່ວຮ້າຍ.

ສອງບັດໃຈທີ່ເປັນຕົວກຳນົດ

ໜ້າເສຍດາຍທີ່ຄຣິສຕຽນມັກບໍ່ເຂົ້າໃຈເລື່ອງນີ້, ເຫດໃດຈຶ່ງເປັນເຊັ່ນນັ້ນ?
ເພາະພວກເຂົາ ບໍ່ສາມາດແຍກແຍະຄວາມແຕກຕ່າງລະຫວ່າງສອງສະຖານະການ
ເຊິ່ງພາຍນອກອາດເບິ່ງ ຄ້າຍຄືກັນໄດ້,
ແຕ່ໃນຄວາມເປັນຈິງນັ້ນແຕກຕ່າງກັນຢ່າງສິ້ນເຊີງທັງໃນດ້ານລັກສະນະ ແລະ
ສາເຫດ ໃນດ້ານໜຶ່ງຄື: ການຂົ່ມເຫັງເພາະຄວາມຊອບທຳ ແຕ່ໃນອີກດ້ານໜຶ່ງຄື:
ການພິພາກສາຂອງພຣະເຈົ້າທີ່ມີຕໍ່ຄົນຊົ່ວ.

ຄວາມແຕກຕ່າງລະຫວ່າງ ສອງສະຖານະການນີ້
ຖືກສະແດງໃຫ້ເຫັນໂດຍຂໍ້ຄວາມທີ່ປຽບທຽບ ດັ່ງຕໍ່ໄປນີ້ຄື:
ການຖືກຂົ່ມເຫັງມາຈາກຄົນຊົ່ວທີ່ມີຕໍ່ຄົນຊອບທຳ ແຕ່ການພິພາກສາມາຈາກ
ພຣະເຈົ້າຜູ້ຊົງຊອບທຳທີ່ມີຕໍ່ຄົນຊົ່ວ ດັ່ງນັ້ນ,
ການຖືກຂົ່ມເຫັງເນື່ອງດ້ວຍຄວາມຊອບທຳ ແລະ
ການພິພາກສາເນື່ອງດ້ວຍຄວາມຊົ່ວຈຶ່ງຕ່າງກັນຂ້າມທັງໃນດ້ານຂອງແຫຼ່ງທີ່ມາ,
ວັດຖຸປະສົງ ແລະຜົນລັບ.

ພຣະຄຳພີຕອບຢ່າງຊັດເຈນວ່າ ຄຣິສຕຽນຕ້ອງຄາດຫວັງວ່າຈະຖືກຂົ່ມເຫັງ
ໃນຄຳເທດສະໜາເທິງພູເຂົາ ພຣະເຍຊູຊົງຕຣັດກັບເຫຼົ່າສາວົກຂອງພຣະອົງວ່າ:

> "ຜູ້ໃດຖືກຂົ່ມເຫັງເພາະເຫັນແກ່ຄວາມຊອບທຳກໍ່ເປັນສຸກ
> ເພາະວ່າອານາຈັກ ສະຫວັນເປັນຂອງຜູ້ນັ້ນ' ເມື່ອຄົນກ່າວນິນທາ ແລະ
> ຂົ່ມເຫັງເຈົ້າທັງຫຼາຍ ແລະ
> ເວົ້າຄວາມຊົ່ວອັນບໍ່ຈິງທຸກຢ່າງຕໍ່ສູ້ເຈົ້າທັງຫຼາຍເພາະເຫັນແກ່ເຮົາພວ
> ກເຈົ້າກໍ່ເປັນສຸກ." (ມັດທາຍ 5:10-11 ພຄສ2015)

ໂປໂລຂຽນເຖິງຕີໂມທຽວ ໃນທຳນອງດຽວກັນວ່າ:

> "ແທ້ຈິງ ບັນດາຄົນທີ່ປາຖະໜາຈະດຳເນີນຊີວິດຄຣິດຕຽນ
> ເປັນຄົນນັບຖື ພຣະເຈົ້າຢ່າງຖືກຕ້ອງ ກໍ່ຈະຖືກກົດຂີ່ຂົ່ມເຫັງ" (2
> ຕີໂມທຽວ 3:12 ພຄສ2015)

ດັ່ງນັ້ນ, ຄຣິສຕຽນຈຶ່ງຕ້ອງຕຽມພ້ອມທີ່ຈະອົດທົນຕໍ່ການຂົ່ມເຫັງ
ເພາະຄວາມເຊື່ອ ແລະ ວິຖີຊີວິດຂອງພວກເຂົາ
ແລະຍ້ອງຖືວ່ານີ້ເປັນສິດທິພິເສດອີກດ້ວຍ..

ໃນທຳນອງດຽວກັນ ຄຣິສຕຽນ ບໍ່ຄວນຖືກລວມຢູ່ໃນ
ການພິພາກສາຂອງພຣະເຈົ້າ ທີ່ມີຕໍ່ຄົນຊົ່ວ
ຫຼັກການຂໍ້ນີ້ມີກ່າວໄວ້ຫຼາຍຄັ້ງໃນພຣະຄຳພີ ໃນ 1ໂກຣິນໂທ11:32 (ພຄສ2015)
ໂປໂລຂຽນເຖິງ ເພື່ອຜູ້ເຊື່ອຂອງເຂົາກ່າວວ່າ: "
ເມື່ອເຮົາທັ້ງຫຼາຍຖືກທຳໂທດໂດຍອົງພຣະ ຜູ້ເປັນເຈົ້ານັ້ນ
ພວກເຮົາກໍ່ຖືກພຣະອົງຊົງສອນ ເພື່ອບໍ່ໃຫ້ເຮົາຖືກພິພາກສາລົງໂທດດ້ວຍກັນ
ກັບໂລກ" ຂໍ້ນີ້ສະແດງໃຫ້ເຫັນວ່າສິ່ງທີ່ພຣະເຈົ້າກະທຳຕໍ່ຜູ້ເຊື່ອນັ້ນ
ແຕກຕ່າງຈາກສິ່ງທີ່ ພຣະອົງຊົງກະທຳຕໍ່ໂລກ, ໃນຖານະຜູ້ເຊື່ອ
ເຮົາອາດຈະຄາດຫວັງທີ່ຈະປະສົບກັບການຕີສອນ ຂອງພຣະເຈົ້າ
ຫາກເຮົາຍອມຮັບການຕີສອນ ແລະຈັດລະບຽບຊີວິດຂອງເຮົາໃຫ້ຖືກຕ້ອງ
ເຮົາກໍ່ຈະບໍ່ຕົກຢູ່ພາຍໃຕ້
ການພິພາກສາທີ່ມາເຖິງຜູ້ທີ່ບໍ່ເຊື່ອຫຼືໂລກໂດຍທົ່ວໄປດຈຸດປະສົງ ສຸດທ້າຍ
ຂອງການສອນຂອງພຣະເຈົ້າທີ່ມີຕໍ່ເຮົາໃນຖານະຜູ້ເຊື່ອຄື: ເພື່ອປົກປ້ອງເຮົາຈາກ
ການໄດ້ຮັບການພິພາກສາຂອງພຣະອົງທີ່ມີຕໍ່ຜູ້ບໍ່ເຊື່ອ.

ອົບພະຍົບບົດທີ7 ຫາບົດທີ12 ບັນທຶກໄວ້ວ່າ:
ພຣະເຈົ້າຊົງນຳການພິພາກສາສິບປະການ ທີ່ມີຄວາມຮຸນແຮງເພີ່ມຂຶ້ນເລື້ອຍໆມາ
ເໜືອຊາວເອຢິບ ເພາະພວກເຂົາບໍ່ຍອມຟັງຜູ້ເຜີຍ ພຣະວັດຈະນະຂອງພຣະອົງຄື:
ໂມເຊ ແລະ ອາໂຣນ ຕະຫຼອດຊ່ວງເວລາທີ່ປະຊາກອນຂອງ ພຣະເຈົ້າຄື:
ຊົນຊາດອິດສະຣາເອນ ກໍ່ອາໄສຢູ່ຖ່ານກາງເອຢິບ ແຕ່ບໍ່ມີການພິພາກສາໃດ
ໃນສິບປະການນັ້ນແຕະຕ້ອງພວກເຂົາເລີຍ ໃນອົບພະຍົບ11:7 (ພຄສ2015)
ໄດ້ລະບຸເຖິງ ເຫດການນີ້ໄວ້ຊັດເຈນ

> "ແຕ່ໃນໝູ່ບ້ານຂອງຊົນຊາດອິດສະຣາເອນ
> ແມ່ນແຕ່ສຸນັຂຫມາເຫົ່າຄົນ ແລະ ສັດກໍ່ຈະບໍ່ມີ ແລ້ວເຈົ້າກໍ່ຈະຮູ້ວ່າ
> ພຣະເຈົ້າຢາເວໄດ້ໃຫ້ຄວາມແຕກຕ່າງກັນ ລະຫວ່າງຊາວເອຢິບ ແລະ
> ຊາວອິດສະຣາເອນ."

ການພິພາກສາ ບໍ່ໄດ້ຕົກຢູ່ກັບ ອິດສະຣາເອນເພາະພຣະເຈົ້າ
"ຊົງກະທຳໃຫ້ເກີດຄວາມ ແຕກຕ່າງ"
ລະຫວ່າງຊົນຊາດຂອງພຣະອົງກັບປະຊາກອນເອຢິບ ແມ່ນແຕ່ໜາໃນເອຢິບ
ກໍ່ຕ້ອງຍອມຮັບຄວາມແຕກຕ່າງນີ້!
ແລະຄວາມແຕກຕ່າງດັ່ງກ່າວຍັງມີຜົນຈົນເຖິງ ທຸກວັນນີ້.

ຈຳນວນເທົ່າໃດຈຶ່ງຈະພຽງພໍ ?

ອັບຣາຮາມຍັງຄົງສົນທະນາກັບພຣະເຈົ້າຕໍ່ໄປກ່ຽວກັບເມືອງໂຊໂດມ
ໂດຍພະຍາຍາມທີ່ຈະ ທູນຖາມເຖິງຈຳນວນຄົນຊອບທຳຂັ້ນຕ່ຳ
ທີ່ຈຳເປັນໃນການປົກປ້ອງທັງເມືອງນັ້ນໃຫ້ພົ້ນຈາກ ການພິພາກສາ
ທ່ານເລີ່ມຕົ້ນທີ່ຫ້າສິບຄົນ ຈາກນັ້ນດ້ວຍຄວາມຍ້ຳເກງທີ່ມີຕໍ່ພຣະເຈົ້າ
ແລະຄວາມມຸ້ງໝັ້ນດັດດ່ຽວ ທ່ານໄດ້ທູນຂໍລົດຈຳນວນລົງເລື້ອຍໆຈົນເຖິງສິບຄົນ
ໃນທີ່ສຸດ ພຣະເຈົ້າຊົງຮັບຮອງກັບອັບຣາຮາມວ່າ
ຫາກພຣະອົງຊົງພົບກັບຄົນຊອບທຳພຽງສິບຄົນ ໃນເມືອງໂຊໂດມ
ພຣະອົງຈະຊົງໄວ້ຊີວິດຄົນທັງເມືອງເພື່ອສິບຄົນນີ້.

ປະຊາກອນເມືອງໂຊໂດມມີຈຳນວນເທົ່າໃດ?
ຄົງເປັນການຍາກທີ່ຈະປະເມີນຕົວເລກ ທີ່ແນ່ນອນໄດ້
ຢ່າງໃດກໍ່ຕາມມີຕົວເລກປະຊາກອນຂອງເມືອງອື່ນໆ ໃນປາແລັດສະໄຕ
ບູຮານທີ່ສາມາດໃຊ້ເປັນລັກຖານປຽບທຽບໄດ້
ເມື່ອພິຈາລະນາຈາກເມືອງເຫຼົ່ານີ້ແລ້ວ
ເຮົາສາມາດກ່າວໄດ້ວ່າປະຊາກອນເມືອງໂຊໂດມໃນສະໄໝຂອງ
ອັບຣາຮາມໜ້າຈະມີ ບໍ່ຕ່ຳກ່ວາໜຶ່ງໝື່ນຄົນ.

ພຣະເຈົ້າຊົງຮັບຮອງກັບອັບຣາຮາມວ່າ ຖ້າມີຄົນຊອບທຳຢູ່ດ້ວຍສິບຄົນ
ກໍ່ສາມາດປົກປ້ອງ ເມືອງທີ່ມີປະຊາກອນຢ່າງໜ້ອຍໜຶ່ງໝື່ນຄົນໄວ້ໄດ້,
ນັ້ນຄືອັດຕາສ່ວນໜຶ່ງຕໍ່ໜຶ່ງພັນ ອັດຕາສ່ວນດຽວກັນນີ້ "ໜຶ່ງຕໍ່ໜຶ່ງພັນ"
ປາກົດໃນໂຢບ33:22 ແລະ ບັນຍາຈານ7:28

ຂໍ້ພຣະຄຳພີທັ້ງສອງຕອນນີ້ຊີ້ໃຫ້ເຫັນວ່າ
ຄົນໜຶ່ງຄົນນັ້ນເປັນຜູ້ຊອບທຳທີ່ໂດດດັ່ນ
ໃນຂະນະທີ່ຄົນອື່ນໆທີ່ເຫຼືອທັ້ງໝົດຕ່ຳກ່ວາມາດຕະຖານຂອງພຣະເຈົ້າ.

ເຮົາສາມາດຂະຫຍາຍອັດຕາສ່ວນນີ້ອອກໄປໄດ້ລ້ວຍໆ
ຄືການມີຄົນຊອບທຳຢູ່ດ້ວຍສິບຄົນ ສາມາດປົກປ້ອງຊຸມຊົນໜຶ່ງຫມື່ນຄົນໄວ້ໄດ້,
ການມີຄົນຊອບທຳຢູ່ນຳຫນຶ່ງຮ້ອຍຄົນ ສາມາດປົກປ້ອງຊຸມຊົນໜຶ່ງແສນຄົນໄດ້,
ການມີຄົນຊອບທຳຢູ່ນຳຫນຶ່ງພັນຄົນ ສາມາດ ປົກປ້ອງຊຸມຊົນໜຶ່ງລ້ານຄົນໄວ້ໄດ້,
ແລ້ວຕ້ອງການມີຄົນຊອບທຳຈຳນວນຈັກຄົນ
ເພື່ອປົກປ້ອງປະເທດທີ່ມີຂະໜາດໃຫຍ່ເທົ່າກັບສະຫະຣັດອາເມຣິກາ
ເຊິ່ງມີປະຊາກອນ ໂດຍປະມານ 300 ລ້ານກ່ວາຄົນ? ນັ້ນກໍ່ຄືປະມານ 300,000
ຄົນ

ຕົວເລກເຫຼົ່ານີ້ຊວນໃຫ້ຄິດວ່າມີຫຼັກຖານໃດໃນພຣະຄຳພີທີ່ເຮັດໃຫ້ເຮົາເຊື່ອແບບນັ້ນໄດ້ຫຼືບໍ່ ເຊັ່ນ:
ຄົນຊອບທຳພຽງສອງແສນຫ້າໝື່ນກ່ວາຄົນກະຈັດກະຈາຍຄືເມັດເກືອຢູ່ທົ່ວອາເມຣິກາ
ກໍ່ພຽງພໍທີ່ຈະປົກປ້ອງປະເທດຊາດທັງໝົດຈາກການພິພາກສາຂອງພຣະເຈົ້າໄດ້ ແລະ
ເຮັດໃຫ້ໝັ້ນໃຈວ່າພຣະຄຸນແລະພຣະເມດຕາຂອງພຣະອົງຈະຍັງຄົງດຳເນີນຕໍ່ໄປ? ຄົງຈະເປັນ
ການໂງ່ເຂົ້າທີ່ອ້າງວ່າປະມານການຕົວເລກດັ່ງກ່າວເປັນສິ່ງທີ່ຖືກຕ້ອງຢ່າງໃດກໍ່ຕາມ
ພຣະຄຳພີໄດ້ກຳນົດຫຼັກການຕໍ່ໄປຢ່າງຊັດເຈນວ່າການມີຜູ້ເຊື່ອທີ່ຊອບທຳຢູ່ດ້ວຍແ
ປັນບັດໃຈບໍ່ງຊີ້ເຖິງສິ່ງທີ່ພຣະເຈົ້າຊົງກະທຳຕໍ່ຊຸມຊົນນັ້ນໆ.

ສິ່ງນີ້ ນຳເຮົາໄປສູ່ຜົນກະທົບປະການທີ່ສອງຂອງການ ມິຄຣິສຕຽນເປັນ
"ເກືອແຫ່ງແຜ່ນດິນໂລກ"

ເກືອຍັບຍັ້ງການເນົ່າເສຍ

ໃນອາດີດກ່ອນທີ່ຈະມີການປະດິດສ້າງເຄື່ອງຖະໜອມອາຫານດ້ວຍການແຊ່ເຢັນນັ້ນ
ກະລາສີເຮືອທີ່ນຳເນື້ອສັດຕິດຕົວໄປໃນການເດີນທາງໄກຈະໃຊ້ເກືອໃນການຖະໜອມອາຫານ
ຂະບວນການເນົ່າເສຍໄດ້ລົ້ມຕົ້ນຂຶ້ນແລ້ວກ່ອນທີ່ຈະເອົາເນື້ອສັດໄປໝັກເກືອ
ການໝັກເກືອ ບໍ່ໄດ້ກຳຈັດການເນົ່າເສຍ
ແຕ່ເປັນການຍັບຍັ້ງການເນົ່າເສຍໄວ້ຕະຫຼອດການເດີນທາງເພື່ອ
ໃຫ້ກາລາສີເຮືອສາມາດຮັບປະທານເນື້ອສັດຕໍ່ໄປໄດ້ນານຫຼັງຈາກທີ່ມັນບໍ່ຫນ້າຈະຮັບປະທານໄດ້ແລ້ວກໍ່ຕາມ

ການທີ່ມີເຮົາຢູ່ໃນໂລກໃນຖານະສາວົກຂອງພຣະຄຣິດນັ້ນ
ປຽບເໝືອນເກືອທີ່ຊ່ວຍຮັກສາ ເນື້ອສັດ,
ຂະບວນການເຊື່ອມຊາມຈາກບາບໄດ້ລົ້ມທ່ຽງແລ້ວ ເຊິ່ງປາກົດໃຫ້ເຫັນ
ໃນທຸກດ້ານຂອງມະນຸດ ທັງສິນທຳ, ສາສາໜາ, ສັງຄົມ ແລະການເມືອງ,
ເຮົາບໍ່ສາມາດ ກຳຈັດຄວາມເຊື່ອມຊາມທີ່ເກີດຂຶ້ນແລ້ວໄດ້
ແຕ່ເຮົາສາມາດຍັບຍັ້ງມັນໄວ້ໄດ້ນານພໍຈົນ ກ່ວາພຣະປະສົງຂອງພຣະຄຸນ
ແລະພຣະເມດຕາຂອງພຣະເຈົ້າຈະບັນລຸຜົນຢ່າງສົມບູນ
ຈາກນັ້ນເມື່ອມາເຖິງເວລາທີ່ອິດທິພົນຂອງເຮົາບໍ່ສາມາດຮັບຮູ້
ຫຼືສຳພັດໄດ້ອີກຕໍ່ໄປ ຄວາມເຊື່ອມຊາມກໍ່ຈະມາເຖິງຈຸດສູງສຸດ ແລະ
ຜົນລົບກໍ່ຄືຄວາມເສື່ອມສະຫຼາຍຢ່າງສິ້ນເຊີງ.

ຕົວຢ່າງຂອງເກືອທີ່ມີປະສິດທິພາບໃນການຍັບຍັ້ງການເນົ່າເສຍນັ້ນ
ໄດ້ອະທິບາຍເຖິງຄຳສອນ ຂອງໂປໂລໃນ 2 ເທສະໂລນິກ2:3-12 (ພຄສ2015)
ໂດຍໂປໂລເຕືອນວ່າ: ຄວາມຊົ່ວຮ້າຍ
ຂອງມະນຸດຈະມາເຖິງຈຸດສູງສຸດໃນບຸກຄົນນັ້ນທີ່ຈະເປັນຜູ້ປົກຄອງໂລກ
ຜູ້ທີ່ໄດ້ຮັບອຳນາດ ຫນືອທຳມະຊາດ ແລະຖືກຄອບຄຸມຫຼືບົງການຈາກຊາຕານເອງ
ໂປໂລເອີ້ນຜູ້ປົກຄອງຜູ້ນີ້ວ່າ "ຄົນແຫ່ງການບາບ (ຫຼືຄົນນອກກົດຫມາຍ)" ແລະ
"ລູກແຫ່ງຄວາມພິນາດ" (ຂໍ້3) ໃນ 1 ໂຢຮັນ2:18(ພຄສ2015), ເຂົາຖືກເອີ້ນວ່າ
"ຜູ້ຕໍ່ສູ້ຕໍ່ພຣະຄຣິດ" (ພຄສ2015) ແລະ ໃນ ພຣະນິມິດ13:4 (ພຄສ2015)
ເຂົາຖືກເອີ້ນວ່າ "ສັດຮ້າຍ" ຜູ້ປົກຄອງຜູ້ນີ້ອ້າງວ່າຕົວເອງ ເປັນພຣະເຈົ້າ ແລະ
ຮຽກຮ້ອງໃຫ້ມີການນະມັດສະການຈາກຄົນທັ່ງໂລກ.

ການປາກົດຕົວຂອງຜູ້ປົກຄອງທີ່ຊົ່ວຮ້າຍນີ້ ເປັນສິ່ງທີ່ລຶກລັ່ງບໍ່ໄດ້
ໂປໂລກ່າວຢ່າງຫມັ້ນໃຈວ່າ “ຂະນະນັ້ນຄົນນອກກົດຫມາຍຈະປາກົດຕົວຂຶ້ນ”
(2ເທສະໂລນິກ 2:8 ພຄສ2015) ໂປໂລ ຍັງປະກາດໃນຂໍ້ດຽວກັນວ່າ
ພຣະຄຣິດແທ້ຈະຊົງເປັນຜູ້ພິພາກສາຄັ້ງສຸດທ້າຍຕໍ່ພຣະຄຣິດ ທຽມເທັດນີ້ຄື:
“...ແລະອົງພຣະເຍຊູເຈົ້າກໍຈະປະຫານມັນເສຍດ້ວຍລົມປາກຈາກພຣະອົງ ແລະ
ຈະລ້າງຜານໃຫ້ມັນດັບສູນໄປ ດ້ວຍແສງອັນຮຸ່ງເຮືອງ
ໃນເວລາທີ່ພຣະອົງສະເດັດມາ"

ຫນ້າເສົ້າທີ່ນັກເທດສະໜາບາງຄົນນຳຄຳສອນເລື່ອງຕໍ່ສູ້ຕໍ່ພຣະຄຣິດ
ມາໃຊ້ປຸກຝັ່ງຕໍ່ ທັດສະນະຄະຕິຂອງຄຣິສຕຽນໃຫ້ຍອມແພ້ ຫຼືບໍ່ຕອບໂຕ້
ແລະເຊື່ອໃນສິ່ງທີ່ຖືກກຳນົດໄວ້ ລ່ວງໜ້າແລ້ວ (ຫຼືເອີ້ນທ່ວໄປວ່າ ອະຕາກຳ
ຫຼືໂຊກສະຕາ ທີ່ບໍ່ສາມາດປ່ຽນແປງໄດ້-ຜູ້ແປ) ໂດຍພວກເຂົາກ່າວວ່າ
"ການຕໍ່ສູ້ຕໍ່ພຣະຄຣິດກຳລັງຈະມາຍ ແລະ ທຸກສິ່ງກຳລັງຮ້າຍແຮງ ລົງເລື້ອຍໆ
ເຮົາບໍ່ສາມາດເຮັດຫຍັງໄດ້ກ່ຽວກັບເລື່ອງນີ້ໄດ້ເລີຍ" ຜົນກໍ່ຄືຄຣິສຕຽນມັກຈະ
ນັ່ງເສີຍໆ ດ້ວຍຄວາມສິ້ນຫວັງໂດຍບໍ່ເຮັດຫຍັງ
ແລະເບິ່ງການຖືກທຳລາຍລ້າງຂອງຊາຕານ
ດຳເນີນໄປຮອບຕົວຂອງພວກເຂົາໂດຍບໍ່ມີການຄວບຄຸມໃດໆ.

ທັດສະນະທີ່ຍອມແພ້ຫຼືບໍ່ຕອບໂຕ້
ແລະເຊື່ອໃນສິ່ງທີ່ຖືກກຳນົດໄວ້ລ່ວງໜ້າແລ້ວນັ້ນ ເປັນເລື່ອງຫນ້າເສົ້າ
ແລະບໍ່ໄດ້ເປັນໄປຕາມພຣະຄຳພີ ເຖິງແມ່ນຈະເປັນຄວາມຈິງໃນທີ່ສຸດ
ຜູ້ຕໍ່ສູ້ຕໍ່ພຣະຄຣິດ ຈະຕ້ອງປາກົດຕົວຂຶ້ນ
ແຕ່ກໍ່ບໍ່ຈິງທີ່ວ່າເຮົາບໍ່ສາມາດເຮັດຫຍັງເຂົາ ໄດ້ເລີຍໃນຕອນນີ້.

ອຳນາດແຫ່ງການຫນ່ວງໜ່ວງ

ຈົນເຖິງປັດຈຸບັນນີ້ ຍັງມີອຳນາດບາງຢ່າງທີ່ຍັງຄົງເຮັດວຽກຢູ່ໃນໂລກທີ່ທ້າທາຍ,
ຕໍ່ຕ້ານ ແລະຫນ່ວງໜ່ວງອິນຍານຂອງຜູ້ຕໍ່ຕ້ານພຣະຄຣິດ

ຣິດອຳນາດແຫ່ງການຫນ່ວງໜ່ວງ
ເຊິ່ງປັດຈຸບັນກຳລັງຍັບຍັ້ງການປາກົດຕົວຢ່າງສົມບູນ
ໃນອາລະສຸດທ້າຍຂອງການຕໍ່ຕ້ານພຣະຄຣິດຄື:
ການສະຖິດຢູ່ການເປັນສ່ວນພຣະອົງຂອງ ພຣະວິນຍານບໍຣິສຸດ
ພາຍໃນຄຣິສຕະຈັກ ສິ່ງນີ້ປາກົດຊັດເຈນເມື່ອເຮົາຕິດຕາມການ
ເປີດເຜີຍຂອງພຣະຄຳພີທີ່ກ່ຽວຂ້ອງກັບພຣະບຸດ ແລະພຣະທາຣະກົດ
ຂອງພຣະວິນຍານ ບໍຣິສຸດ.

ຕອນຕົ້ນຂອງພຣະຄຳພີ ໃນປະຖົມມະການ1:2 (ພຄສ2015)
ເຮົາໄດ້ຮັບການບອກກ່າວວ່າ ພຣະວິນຍານຂອງພຣະເຈົ້າໄດ້ປົກຄຸມຢູ່ເທິງໜ້ານ້ຳ"
ນັບຈາກນັ້ນເປັນຕົ້ນມາຕະຫຼອດ ພຣະຄຳພີໃນພັນທະສັນຍາເດີມ
ມີການກ່າວເຖິງພຣະທາຣາກົດຂອງພຣະວິນຍານບໍຣິສຸດ
ເທິງແຜ່ນດິນໂລກຢູ່ຫຼາຍຄັ້ງ ເຖິງແນວໃດກໍ່ຕາມ
ໃນຊ່ວງສຸດທ້າຍຂອງພຣະທາຣາກົດຂອງ ພຣະອົງບົນໂລກນີ້
ພຣະເຍຊູເຈົ້າສັນຍາກັບເຫຼົ່າສາວົກຂອງພຣະອົງວ່າ ພຣະວິນຍານບໍຣິສຸດ
ຈະສະເດັດມາຫາພວກເຂົາໂອງນີ້,

ໃນຮູບແບບໃໝ່ເຊິ່ງແຕກຕ່າງຈາກສິ່ງໃດໆທີ່ເຄີຍເກີດຂຶ້ນ
ບົນໂລກກ່ອນໜ້ານັ້ນ.

ພຣະຜູ້ຊ່ວຍຕາມພຣະສັນຍາ

ໃນໂຢຮັນ 14:16-17 (ພຄສ2015) ພຣະເຢຊູຊົງສັນຍາໄວ້ດັ່ງນີ້:

> “ຝ່າຍເຮົາຈະທູນຂໍພຣະບິດາເຈົ້າ
> ແລະພຣະອົງຈະຊົງປະທານພຣະຜູ້ຊ່ວຍອີກອົງ ໜຶ່ງແກ່ພວກເຈົ້າ
> ເພື່ອຈະຢູ່ກັບພວກເຈົ້າຕະຫຼອດໄປເປັນນິດ. ຄືພຣະວິນຍານ
> ແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຮັບພຣະອົງໄດ້ເພາະໂລກບໍ່ເຫັນ
> ແລະບໍ່ຮູ້ຈັກ ພຣະອົງ, ແຕ່ພວກເຈົ້າຈະຮູ້ຈັກພຣະອົງ
> ເພາະພຣະອົງສະຖິດຢູ່ກັບພວກເຈົ້າ ແລະຢູ່ໃນພວກເຈົ້າ.”

ເຮົາຈະອະທິບາຍພຣະວິຍານຂອງພຣະເຢຊູໃຫມ່ດັ່ງນີ້:
"ເຮົາໄດ້ປະທັບຢູ່ກັບພວກເຈົ້າ ດ້ວຍຕົວຂອງເຮົາເອງເປັນເວລາສາມປີເຄິ່ງ
ແລະບັດນີ້ເຮົາກຳລັງຈະຈາກພວກເຈົ້າໄປ ເມື່ອເຮົາຈາກໄປແລ້ວ
ຈະມີອີກບຸກຄົນຫນຶ່ງມາແທນເຮົາ ບຸກຄົນນີ້ຄື: ພຣະວິນຍານບໍຣິສຸດ
ເມື່ອພຣະອົງສະເດັດມາພຣະອົງຈະສະຖິດຢູ່ກັບພວກເຈົ້າຕະຫຼອດໄປ.

ການແຈກປ່ຽນຕົວບຸກຄົນທີ່ພຣະເຢຊູຊົງສັນຍານັ້ນເກີດຂຶ້ນເປັນສອງຂັ້ນຕອນຄື:
ຂັ້ນຕອນ ທຳອິດ ພຣະເຢຊູສະເດັດສູ່ສະຫວັນ ແລະສົບວັນຕໍ່ມາ
ພຣະວິນຍານບໍຣິສຸດສະເດັດລົງມາ ໃນວັນເພັນເຕຄໍສະຕ
ໃນຈຸດນີ້ໃນປະຫວັດສາດພຣະວິນຍານບໍຣິສຸດ ໄດ້ສະເດັດລົງມາ
ຈາກສະຫວັນໃນຖານະບຸກຄົນໜຶ່ງ ແລະສະຖິດຢູ່ແຜ່ນດິນໂລກ ບັດນີ້ພຣະອົງຊົງ
ເປັນຜູ້ແທນ ສ່ວນພຣະອົງຂອງພຣະເຈົ້າຜູ້ປະທັບເທິງແຜ່ນດິນໂລກ
ທີ່ປະທັບທີ່ແທ້ຈິງຂອງພຣະອົງຄື: ຮ່າງກາຍຂອງຜູ້ທີ່ເຊື່ອແທ້ຈິງ ເຊິ່ງເອີ້ນກັນວ່າ
"ຄຣິສຕະຈັກ" ໂປໂລກ່າວກັບຜູ້ເຊື່ອທີ່ເປັນພຣະກາຍນີ້ ໃນ 1 ໂກຣິນໂທ
3:16(ພຄສ2015) ວ່າ:

> “ພວກເຈົ້າຮູ້ບໍ່ວ່າ, ພວກເຈົ້າເປັນວິຫານຂອງພຣະເຈົ້າ
> ແລະພຣະວິນຍາ ຂອງ ພຣະເຈົ້າກໍສະຖິດຢູ່ໃນພວກເຈົ້າ ?”

ພຣະທາຊະກິດຍິ່ງໃຫຍ່ຂອງພຣະວິນຍານບໍຣິສຸດພາຍໃນຄຣິສຕະຈັກ
ຄືການຕຽມພຣະກາຍ ໃຫ້ສົມບູນ
ເພື່ອພຣະຄຣິດເມື່ອການຈັດຕຽມສຳເລັດສົມບູນແລ້ວ ພຣະກາຍນີ້ຈະຖືກນຳໄປ
ມອບໃຫ້ແກ່ເຈົ້າບ່າວ ທັນທີທີ່ພຣະທາຊະກິດຂອງພຣະວິນຍານບໍຣິສຸດ
ພາຍໃນຄຣິສຕະຈັກ ສຳເລັດລົງ
ພຣະອົງຈະຊົງຖືກຖອນອອກຈາກໂລກນີ້ອີກຄັ້ງໜຶ່ງ ໂດຍການນຳພຣະກາຍ
ທີ່ສົມບູນຂອງພຣະຄຣິດໄປພ້ອມກັບພຣະອົງດ້ວຍ
ດັ່ງນັ້ນເຮົາອາດຮຽບຮຽງຄຳກ່າວຂອງ ໂປໂລ ໃນ 2 ເທສະໂລນີກ2:7ໃຫມ່ໄດ້ດັ່ງນີ້:

> “ອຳນາດອັນລຶກລັບແຫ່ງຄວາມຊົ່ວຮ້າຍກຳລັງເນີນການຢູ່ແລ້ວ,
> ແຕ່ສິ່ງທີ່ທີ່ຕ້ອງເກີດຂຶ້ນນັ້ນ ຈະເກີດຂຶ້ນໄດ້
> ກໍຕໍ່ເມື່ອຜູ້ທີ່ກີດກັ້ນມັນໄວ້ນັ້ນຖືກຍົກເລີກໄປເສຍ.”

ໃນໂລກນີ້ ມີວິນຍານຂອງການຕໍ່ຕ້ານພຣະຄຣິດ
ເຊິ່ງກຳລັງເຮັດວຽກເພື່ອໃຫ້ການຕໍ່ຕ້ານຕໍ່ ພຣະຄຣິດປາກົດຕົວຂຶ້ນ
ສ່ວນພາຍໃນສາວົກຂອງພຣະຄຣິດ ກໍມີພຣະວິນຍານບໍຣິສຸດ
ຜູ້ຊົງກຳລັງຢັບຢັ້ງການປາກົດຕົວຂອງການຕໍ່ຕ້ານພຣະຄຣິດ ດັ່ງນັ້ນ,
ເຫຼົ່າສາວົກຜູ້ເຊື່ອມີ ພຣະວິນຍານບໍຣິສຸດສະຖິດຢູ່ພາຍໃນ
ເຈົ້ງເຮັດຫນ້າທີ່ເໝືອນເຄື່ອງກີດຂວາງເພື່ອຢັບຢັ້ງ
ບໍ່ໃຫ້ສິ່ງນອກກົດຫມາຍມາເຖິງຈຸດສູງສຸດ ແລະ
ບໍ່ໃຫ້ການຕໍ່ຕ້ານພຣະຄຣິດປາກົດຕົວ ຄັ້ງສຸດທ້າຍ
ຈົນກ່ວາພຣະວິນຍານບໍຣິສຸດພ້ອມກັບເຫຼົ່າສາວົກ ເຊິ່ງເປັນພຣະກາຍຂອງ
ພຣະຄຣິດ ທີ່ສຳເລັດສົມບູນຈະຖືກຖອນອອກຈາກໂລກນີ້ແລ້ວເທົ່ານັ້ນ
ອຳນາດນອກ
ກົດຫມາຍເຈົ້ງຈະສາມາດດຳເນີນການໄປສູ່ຈຸດປະສົງສູງສຸດຂອງການຕໍ່ຕ້ານພຣະ
ຄຣິດໄດ້ໂດຍບໍ່ມີການກົດຫນ່ວງ ໃນປັດຈຸບັນນີ້ ກໍເປັນທ້ຽວຫິພິເສດ ແລະ
ຄວາມຮັບຜິດຊອບຂອງເຫຼົ່າ ສາວົກຂອງພຣະຄຣິດ
ໂດຍຣິດອຳນາດຂອງພຣະວິນຍານບໍຣິສຸດທີ່ຈະ "ເອົາຊະນະ" ອຳນາດ
ຂອງການຕໍ່ຕ້ານພຣະຄຣິດ ແລະ ຢັບຢັ້ງພວກເຂົ້າໄວ້.

ເກືອທີ່ມີປະສິດທິພາບ

ໃນຖານະທີ່ເຮົາເປັນເກືອນແຫ່ງແຜ່ນດິນໂລກ
ເຮົາຜູ້ເປັນເຫຼົ່າສາວົກຂອງພຣະຄຣິດ ຈົ່ງມີຫນ້າທີ່ສຳຄັນສອງປະການ,
ປະການທຳອິດຄື: ໂດຍການມີເຮົາຢູ່ດ້ວຍ ເຮົານຳໂລກ
ມາມອບໄວ້ພາຍໃຕ້ພຣະຄຸນ ແລະພຣະເມດຕາຂອງພຣະເຈົ້າຢ່າງຕໍ່ເນື່ອງ,
ປະການທີ່ສອງຄື: ໂດຍຣິດອຳນາດຂອງພຣະວິນຍານບໍຣິສຸດຢູ່ໃນຕົວເຮົາ
ເຮົາຈົ່ງຢັບຢັ້ງອຳນາດແຫ່ງການ ຊົ່ວມຊ້ານ
ແລະຄວາມອະທຳໄວ້ຈົນກ່ວາຈະເຖິງເວລາທີ່ພຣະເຈົ້າຊົງກຳນົດ.

ໃນການເຮັດຫນ້າທີ່ຄວາມຮັບຜິດຊອບເຫຼົ່ານີ້ໃຫ້ສຳເລັດນັ້ນ
ຄຣິສຕະຈັກຈຳເປັນຕ້ອງ
ຍຶດຫມັ້ນໃນການເປັນເຄື່ອງກີດຂວາງບໍ່ໃຫ້ຈຸດມຸ່ງຫມາຍສູງສຸດຂອງຊາຕານສຳເລັ
ດກ່ອນ: ການຄອບຄອງທົ່ວທັ້ງໂລກ ນີ້ເປັນເຫດຜົນທີ່ໂປໂລກ່າວໄວ້ໃນ
2ເທສະໂລນີກ2:3 (ພຄ ສ2015) ວ່າ " ຢ່າໃຫ້ຜູ້ໃດລວງລວງພວກເຈົ້າ
ໃນທາງໃດມລວທາງໜຶ່ງເລີຍ, ດ້ວຍວ່າ ອັນນັ້ນຈະມາບໍ່ເຖິງ
ຈົນກ່ວາການທ່ວະຍົດຄັ້ງສຸດທ້າຍຈະເກີດຂຶ້ນກ່ອນແລະ ຜູ້ຊົ່ວຮ້າຍ
ຈະປາກົດຕົວຂຶ້ນ ຄືຜູ້ທີ່ຖືກຫມາຍໄວ້ສຳລັບນະຮົກ"
ແທ້ຈິງແລ້ວຫມາຍເຖິງການລະຖິ້ມ ຄວາມເຊື່ອ ນັ້ນຄື: ການອອກຈາກຄວາມເຊື່ອ

ການໃດທີ່ຄຣິສຕະຈັກຍັງຄົງຍຶດໝັ້ນ
ແລະບໍ່ຍອມປະນີປະນອມໃນຄວາມເຊື່ອຄຣິສຕະຈັກ
ກໍມີຣິດອຳນາດທີ່ຈະຢັບຢັ້ງການປາກົດຕົວຄັ້ງສຸດທ້າຍຂອງການຕໍ່ຕ້ານພຣະຄຣິດ
ໄ ຊາຕານເອງກໍເຂົ້າໃຈເລື່ອງນີ້ຢ່າງທ່ອງແທ້ ດັ່ງນັ້ນເປົ້າຫມາຍລັກຂອງຊາຕານຄື
ການທຳລາຍ ຄວາມເຊື່ອ ແລະຄວາມຊອບທຳຂອງຄຣິສຕະຈັກ
ເມື່ອຊາຕານບັນລຸເປົ້າຫມາຍນີ້ແລ້ວ
ເຄື່ອງກີດຂວາງຕໍ່ຈຸດປະສົງຂອງຊາຕານກໍຖືກກຳຈັດອອກໄປ ແລະ
ທາງກໍຈະເປີດໃຫ້ຊາຕານ ໄດ້ຄວບຄຸມທັງຈິດວິນຍານ ແລະ
ທາງກາຍເໜືອໂລກທັງສິ້ນ.

ສົມໝຸດວ່າຊາຕານປະສົບຄວາມສຳເລັດ ເພາະເຮົາໃນຖານະຄຣິສຕຽນ
ບໍ່ໄດ້ເຮັດຫນ້າທີ່ ຂອງເຮົາໃຫ້ສຳເລັດ ແລ້ວຈະເກີດຫຍັງຂຶ້ນຕໍ່ໄປ?
ພຣະເຢຊູຊົງປະທານຄຳຕອບໃຫ້ແກ່ເຮົາຄື: ເຮົາຈະກາຍເປັນ "
ເກືອທີ່ຫມົດຣິດເຄັ້ມ" ພຣະອົງຊົງເຕືອນເຮົາ ເຖິງຜົນລັບທີ່ຈະເກີດຂຶ້ນ
ກັບເກືອທີ່ຫມົດຣິດເຄັ້ມວ່າ:

> “ເຈົ້າທັ້ງຫຼາຍເປັນເກືອສຳລັບມວນມະນຸດໂລກ
> ແຕ່ຖ້າເກືອໝົດຣິດເຄັ້ມແລ້ວ ຈະເຮັດໃຫ້ ເຄັ້ມຄືນໄດ້ອີກຢ່າງໃດ?
> ມັນບໍ່ມີຄ່າເສຍແລ້ວ ດັ່ງນັ້ນ ຈຶ່ງມີແຕ່ໂຍນຖິ້ມ
> ໃຫ້ຄົນຢຽບຢ່ຳເທົ່ານັ້ນ" (ມັດທາຍ 5:13 ພຄສ2015)”

“ບໍ່ມີປະໂຫຍດຫຍັງ!” ນີ້ເປັນຄຳຕຳນິຢ່າງຮຸນແຮງຢ່າງແທ້ຈິງ
ແລ້ວແມ່ນຫຍັງຈະເກີດຂຶ້ນ? ເຮົາຈະ “ຖິ້ມເສຍ” ຫຼືຖືກປະຕິເສດຈາກພຣະເຈົ້າ
ຈາກນັ້ນເຮົາຈະ "ຖືກຄົນຢຽບຢໍ້າ”
ຄົນຈະກາຍເປັນເຄື່ອງມືແຫ່ງການພິພາກສາຂອງພຣະເຈົ້າຕໍ່ຄຣິສຕະຈັກທີ່ບໍ່ມີຄວ
າມເປັນເກືອ ແລະຖິ້ມຄວາມເຊື່ອ
ຫາກເຮົາໃນຄຣິສຕະຈັກບໍ່ສາມາດຍ່ຳຍີ້ງແຫ່ງຄວາມອະທຳໄດ້ ການ
ພິພາກສາຂອງເຮົາກໍຈະຕົກໄປຢູ່ພາຍໃຕ້ອຳນາດຫຼ່ານັ້ນ.

ໃນໂຣມ12:21 (ພຄສ2015)
ໂປໂລນຳສະເໜີແນວທາງເລືອກສອງທາງໃຫ້ເຮົາຢ່າງຊັດເຈນ

> “ຢ່າໃຫ້ຄວາມຊົ່ວໄດ້ຊະນະເຈົ້າ ແຕ່ຈົ່ງຊະນະຄວາມຊົ່ວດ້ວຍຄວາມດີ.”

ມີພຽງສອງທາງເລືອກເທົ່ານັ້ນຄື: ເອົາຊະນະ ຫຼືຖືກເອົາຊະນະບໍ່ມີທາງສາຍກາງ
ບໍ່ມີທາງເລືອກ ທີ່ສາມ
ເຮົາສາມາດໃຊ້ຄວາມດີທີ່ພຣະເຈົ້າປະທານໃຫ້ເຮົາເພື່ອເອົາຊະນະຄວາມຊົ່ວຮ້າຍທີ່
ມາ ປະເຊີນໜ້າເຮົາໄດ້ ແຕ່ຖ້າເຮົາບໍ່ເຮັດເຊັ່ນນັ້ນ
ຄວາມຊົ່ວຮ້າຍນັ້ນຈະກັບມາເອົາຊະນະເຮົາ.

ຂໍ້ຄວາມນີ້,
ມີຄວາມສຳຄັນຮີບດ່ວນເປັນພິເສດສຳລັບພວກເຮົາທີ່ອາໄສຢູ່ໃນປະເທດ
(ຫຼືດິນແດນ) ທີ່ເຮົາຍັງມີເສລີພາບໃນການປະກາດ ແລະປະຕິບັດຕາມຄວາມເຊື
ອຄຣິສຕຽນ ຂອງເຮົາ ໃນຫຼາຍປະເທດທຸກວັນນີ້
ຄຣິສຕຽນໄດ້ສູນເສຍເສລີພາບນີ້ໄປແລ້ວ ໃນຂະນະດຽວ
ກັນກໍມີຜູ້ຄົນຫຼາຍລ້ານຄົນໃນປະເທດຫຼ່ານັ້ນ ທີ່ຖືກປູກຝັງຢ່າງເປັນລະບົບ
ໃຫ້ກຽດຊັງແລະ ດູໝິ່ນສາສາໜາຄຣິດ
ແລະທຸກສິ່ງທີ່ສາສາໜາຄຣິດຍຶດຖືສຳລັບຜູ້ຄົນທີ່ຖືກປູກຝັງເຊັ່ນນີ້
ຍັງບໍ່ມີຄວາມເພິ່ງພໍໃຈ ໃດທີ່ຍິ່ງໃຫຍ່ກ່ວາການຢຽບຢໍ້າ
ຄຣິສຕຽນທີ່ຍັງບໍ່ໄດ້ຢູ່ພາຍໃຕ້ ອຳນາດຂອງພວກເຂົາ.

ຫາກເຮົາເອົາໃຈໃສ່ຕໍ່ຄຳເຕືອນຂອງພຣະເຍຊູ ແລະ
ຮັດໜ້າທີ່ຂອງເຮົາໃນຖານະເກືອ ແຫ່ງແຜ່ນດິນໂລກໃຫ້ສຳເລັດ
ເຮົາມີຣິດອຳນາດທີ່ຈະປ້ອງກັນສິ່ງນີ້ໄດ້ ຫາກເຮົາລະເລີຍ
ແລະຕ້ອງທົນທຸກກັບການພິພາກສາທີ່ຕາມມາ
ສິ່ງທີ່ເຈັບປວດທີ່ສຸດເມື່ອຄິດສະທ້ອນ ເຖິງເລື່ອງນີ້ຄື ສິ່ງນີ້ບໍ່ໜ້າຈະເກີດຂຶ້ນເລີຍ

ຈົດໝາຍຄຳສອນ

ຂໍ້ຄວາມ ຖອດສຽງ: TL-L066-100-LAO
ບັນທຶກຫຼ້າສຸດ: 07 Mar 2025
ເວັບໄຊທ໌: derekprince.com/lao



ປຶ້ມຄຳສອນ

ໃຫ້ຄວາມຈະແຈ້ງ ແລະ ຂະຫຍາຍຄວາມເຂົ້າໃຈ ຂອງທ່ານກ່ຽວກັບ ພຣະຄຳພີ ດ້ວຍ collection ປຶ້ມຄຳສອນ ຄຣິດສະຕຽນ ຂອງ ອາຈານ ດເຣັກ ປຶ້ຣນຊ



ການຜ້ຳດ່ຽວ ປະຈຳວັນ

ຄົ້ນຫາ ບົດຜ້ຳດ່ຽວປະຈຳວັນ ທີ່ສ້ຳງ ແຮງບັນດານໃຈຕາມຫຼັກການ ພຣະຄຳພີ ໂດຍຄຳ ສອນພາກປະຕິບັດ ຂອງ ອາຈານ ດເຣັກ ປຶ້ຣນຊ ເພື່ອຍົກລະດັບ ຄວາມເຊື່ອ ຄຣິດສະຕຽນ ຂອງທ່ານໄດ້ຜົລ.



ລາຍການວິທະຍຸ ທີ່ເປັນມ່ວລະດົກ

ຮັບຟັງຖ້ອຍຄຳ ທີ່ສ້ຳງແຮງບັນດານໃຈ 10 ນາທີ ແລະ ເຊື່ອມຕໍ່ ຄວາມເຊື່ອ ເຂົ້ຳກັບຊີວິດ ຜ່ານ podcast ເຊິ່ງເປັນມ່ວລະດົກ ຂອງອາຈານ ດເຣັກ ປຶ້ຣນຊ



ຄຳເທດສະໜາ

ຮັບຊົມ ຄຳເທດສະໜາ ເຊິ່ງເປັນຕົ້ນສະບັບ ທີ່ທ່ຳສ້ຳເນ້ຳຂຶ້ນໃໝ່ ໃນລະບົບ ດີຈີຕ້ອນ ໂດຍ ອາຈານ ດເຣັກ ປຶ້ຣນຊ ລວມທ້ຳຂໍ້ຄວາມ ຖອດສຽງ ສະບັບເຕັມ (ດາວໂຫຼດຟີຣ)



ແອັບທີ່ເປັນທ່ຳງ່ານ

ດ່ຳວໂຫຼດ ແອັບທີ່ເປັນທ່ຳງ່ານ ຂອງພັນທະກິດ ດເຣັກ ປຶ້ຣນ ໄດ້ຟີຣ ເພື່ອເສີມສ້ຳງຄວາມເຊື່ອຂອງ ທ່ານໄດ້ທຸກທີ່ ທຸກເວລ່ຳ



ການປ່ຳວປະກ່ຳດ

ປ່ຳວປະກ່ຳດຊີວິດ ແລະ ພົບກັບປະສົບການ ໃນລິດອ່ຳນ່ຳດຂອງຖ້ອຍຄຳ ພຣະເຈົ້ຳ ທີ່ ສ່ຳມ່ຳດປ່ຽນແປງຊີວິດໄດ້ ໂດຍຄຳປ່ຳວປະກ່ຳດຂອງເຮົ່ຳ ທີ່ຂຽນຕ່ຳມຫຼັກການຂອງ ພຣະຄຳພີ